ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ສຳນັກງານຂໍ້ມູນຕ້ານການຟອກເງິນ

ເລກທີ: 1005/ສຕຟງ

ນະຄອນຫຼວງວຽງຈັນ, ວັນທີ 15 JUL 2019

# ແຈ້ງການ

**ເຖິງ:** ທ່ານ ຜູ້ອຳນວຍການ ແລະ ຜູ້ຈັດການ ຂອງບັນດາສະຖາບັນການເງິນ ແລະ ສະຖາບັນທີ່ບໍ່ນອນໃນຂະແໜງການເງິນ

ທີ່ນັບຖື,

**ເລື່ອງ:** ຜົນການປະເມີນຄວາມສ່ຽງລະດັບຊາດ ດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ.

- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 191/ຫສນຍ, ລົງວັນທີ 05 ກຸມພາ 2019.

ສຳນັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ) ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງ ສະຖາບັນການເງິນ ລວມມີ: ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດໃຫ້ກູ້ຢືມ ແລະ ໃຫ້ສິນເຊື່ອທຸກປະເພດ, ບໍລິສັດເຊົ່າສິນເຊື່ອ, ບໍລິສັດຮັບບໍລິການໂອນເງິນ, ຮ້ານແລກປ່ຽນເງິນຕາ, ບໍລິສັດປະກັນໄພ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານຊັບສິນ ແລະ ສະຖາບັນທີ່ບໍ່ນອນໃນຂະແໜງການເງິນ ລວມມີ: ບໍລິສັດ ຫຼື ຕົວແທນຈຳໜ່າຍ ແລະ ບໍລິຫານເຄື່ອງມືການຊຳລະທາງດ້ານການເງິນ, ບໍລິສັດຕົວແທນຊື້-ຂາຍ ອະສັງຫາລິມະຊັບ, ທຸລະກິດ ຊື້-ຂາຍວັດຖຸມີຄ່າ ແລະ ເຄື່ອງເກົ່າ, ສະພາທະນາຄວາມ ຫຼື ວິສາຫະກິດກົດໝາຍ, ອົງການທະບຽນສານ, ບໍລິສັດກວດສອບບັນຊີ, ກາຊີໂນ ຊາບວ່າ ສປປ ລາວ ໄດ້ສຳເລັດການຈັດຕັ້ງປະຕິບັດການປະເມີນຄວາມສ່ຽງລະດັບຊາດ ດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (National Money Laundering and Terrorist Financing Risk Assessments; NRA), ລາຍລະອຽດ ສາມາດເຂົ້າເບິ່ງໄດ້ທີ່ເວັບໄຊທ໌ ສຕຟງ www.amlio.gov.la

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ເພີ່ມທະວີຄວາມເອົາໃຈໃສ່ໃນການຫຼຸດຜ່ອນຄວາມສ່ຽງຂອງຂະແໜງການຂອງຕົນຢ່າງເຂັ້ມງວດ.

ຮອງ ຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ

15 2019

ຂັນທະລີ ວົງໄຊຍະລາດ

- ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່: ສຳນັກງານຂໍ້ມູນຕ້ານການຟອກເງິນ ໂທ 021 264624 ຫຼື ແຟັກ 021 265320.